ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 1301/ອຄ.

ນະຄອນຫລວງວຽງຈັນ, ວັນທີ 30/07/2007.

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 3/4/99.
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 67/ນຍ, ລົງວັນທີ 12/4/06.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 17/8/06 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ປະຕິບັດຕາມມາດຕາ 4 ແລະ ມາດຕາ 6 ຂອງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ. ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງ ການເຄື່ອນໄຫວກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ວ່າດ້ວຍບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຈຸດປະສົງຂອງຂໍ້ຕົກລົງສະບັບນີ້ ແມ່ນກຳນົດຫຼັກການໃນການຄຸ້ມຄອງ ການເຄື່ອນໄຫວກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ; ກຳນົດເງື່ອນໄຂ ແລະ ມາດຕະການ ຕໍ່ການດຳເນີນກິດຈະການໂຮງງານ ແລະ ທັງເປັນເຄື່ອງມືໃນການພິຈາລະນາອອກອະນຸຍາດດຳເນີນກິດຈະການໂຮງງານ ເພື່ອແນໃສ່:

1.1 ຮັບປະກັນເງື່ອນໄຂຂອງການອອກແຮງງານຢູ່ພາຍໃນໂຮງງານ ໃຫ້ມີຄວາມປອດໄພ ແລະ ຖືກຕ້ອງຕາມຫຼັກສຸຂະອານາໄມໃຫ້ແກ່ພະນັກງານ ແລະ ແຮງງານ.

1.2 ຮັບປະກັນມາດຕະຖານເຕັກນິກ ຂອງອາຄານໂຮງງານ, ເຄື່ອງຈັກ ອຸປະກອນການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນ.

1.3 ຮັບປະກັນການຄຸ້ມຄອງສິ່ງແວດລ້ອມ, ເພື່ອຫຼີກລ່ຽງເຫດລຳຄານອັນອັບປະໂຫຍດລົບກວນຜູ້ຢູ່ໃກ້ຄຽງ, ຫຼຸດຜ່ອນການສ້າງມົນລະພິດແກ່ສະພາບແວດລ້ອມ ແລະ ສາທາລະນະຊົນ.

## ມາດຕາ 2: ນິຍາມ

2.1 **ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ** ໝາຍເຖິງ ສະຖານທີ່, ອາຄານ ຫຼື ພາຫະນະ ທີ່ບັນຈຸເຄື່ອງຈັກ ຊຶ່ງມີກຳລັງແຮງລວມ ຫລື ກຳລັງແຮງທຽບເທົ່າແຕ່ 5 ແຮງມ້າ ຫຼື 3,73 ກິໂລວັດຂຶ້ນໄປ ຫຼື ໃຊ້ຄົນງານແຕ່ 10 ຄົນຂຶ້ນໄປ. ເພື່ອດຳເນີນການຜະລິດ, ປະກອບ, ສ້ອມແປງ, ປັບປຸງ, ດັດແປງ, ບັນຈຸ ຫຼື ການປຸງແຕ່ງຄືນໃໝ່, ຊຶ່ງໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

2.2 **ກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ** ໝາຍເຖິງ ໂຮງງານອຸດສາຫະກຳປຸງແຕ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2.1 ຂອງຂໍ້ຕົກລົງສະບັບນີ້, ຊຶ່ງໄດ້ຈັດເປັນ 23 ປະເພດໂຮງງານຕາມມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ໂດຍຈັດເປັນກຸ່ມໂຮງງານຕາມລະດັບຄວາມສຳຄັນ ແລະ ໄດ້ຈັດແບ່ງໂຮງງານອຸດສາຫະກຳ ແລະ ຫັດຖະກຳ ເປັນ 3 ລະດັບ, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

2.3 **ເຄື່ອງຈັກ** ໝາຍເຖິງ ສິ່ງທີ່ປະກອບດ້ວຍຊິ້ນສ່ວນຫຼາຍຊິ້ນ ສຳລັບໃຊ້ຜະລິດ ຫຼື ນຳສົ່ງພະລັງງານ, ປຸ່ມ ຫຼື ສັບປຸ່ມທີ່ຂອງພະລັງງານໃດໜຶ່ງເປັນສິ່ງອື່ນໂດຍໃຊ້ກຳລັງນ້ຳ, ອາຍນ້ຳ, ນ້ຳມັນເຊື້ອໄຟ, ອາກາດ, ແກັດ, ໄຟຟ້າ ຫຼື ພະລັງງານຊະນິດອື່ນໆ ຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມກັນ.

2.4 **ແຮງງານ** ໝາຍເຖິງ ກຳມະກອນຜູ້ທີ່ເຮັດວຽກຢູ່ໃນໂຮງງານ, ບໍ່ນັບຜູ້ເຮັດວຽກຄຸ້ມຄອງບໍລິຫານພາຍໃນໂຮງງານ.

2.5 **ອົງການຄຸ້ມຄອງ** ໝາຍເຖິງ ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງອື່ນໆ ລວມທັງອຳນາດການປົກຄອງທ້ອງຖິ່ນ.

2.6 **ຜູ້ອອກໃບອະນຸຍາດດຳເນີນກິດຈະການໂຮງງານ** ໝາຍເຖິງ ຂະແໜງອຸດສາຫະກຳ ແລະ ການຄ້າ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ.

2.7 **ຂະແໜງອຸດສາຫະກຳ ແລະ ການຄ້າ** ໝາຍເຖິງ ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະການຄ້າ ເມືອງ.

2.8 **ເຈົ້າໜ້າທີ່ກວດກາໂຮງງານ** ໝາຍເຖິງ ໜ່ວຍງານ ຫຼື ຜູ້ທີ່ຖືກແຕ່ງຕັ້ງຈາກລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງຫົວໜ້າກົມອຸດສາຫະກຳ ແລະ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

2.9 **ຜູ້ດຳເນີນກິດຈະການໂຮງງານ** ໝາຍເຖິງ ຜູ້ທີ່ໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານໂດຍມີຊື່ຂອງຕົນຢູ່ໃນໃບອະນຸຍາດດຳເນີນກິດຈະການໂຮງງານຖືກຕ້ອງຕາມລະບຽບກົດໝາຍ.

2.10 **ການສ້າງຕັ້ງໂຮງງານ** ໝາຍເຖິງ ການກໍ່ສ້າງອາຄານໂຮງງານ ແລະ ສິ່ງປຸກສ້າງອື່ນໆ, ການຕິດຕັ້ງລະບົບເຄື່ອງຈັກ, ລະບົບເຕັກນິກຄວາມປອດໄພ, ລະບົບ ປ້ອງກັນສິ່ງແວດລ້ອມ ແລະ ອື່ນໆ.

2.11 **ການດຳເນີນກິດຈະການໂຮງງານ** ໝາຍເຖິງ ການດຳເນີນການຜະລິດຂອງໂຮງງານ.

2.12 ການຂະຫຍາຍໂຮງງານ ໝາຍເຖິງ ການເພີ່ມຈຳນວນ, ການປັບປຸງ ຫຼື ດັດແປງເຄື່ອງຈັກໃຫ້ກຳລັງແຮງມ້າເພີ່ມຂຶ້ນ ຫຼື ການເພີ່ມເນື້ອທີ່ອາຄານໂຮງງານ ຫຼື ທັງສອງຢ່າງພ້ອມກັນ.

**ມາດຕາ 3: ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ເພື່ອຄຸ້ມຄອງການເຄື່ອນໄຫວກິດຈະການ ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ, ທຸກລະດັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

ສຳລັບກິດຈະການໂຮງງານອຸດສາຫະກຳປຸງແຕ່ງແບບຄອບຄົວ ທີ່ມີຂະໜາດຕ່ຳກວ່າ ຕາມທີ່ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ທີ່ເປັນການລົງທຶນຂອງຄອບຄົວ ທີ່ມີວິຊາຊີບ ຫຼື ເປັນການຮ່ວມມືກັນຂອງປະຊາຊົນ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ໂດຍການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ. ກິດຈະການດັ່ງກ່າວຕ້ອງໄດ້ປະຕິບັດພັນທະ, ພາສີ ແລະ ອາກອນ ຕາມລະບຽບກົດໝາຍ.

## ໝວດທີ 2
## ວ່າດ້ວຍການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງ

**ມາດຕາ 4: ເງື່ອນໄຂການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ**

4.1 ກ່ອນການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ຜູ້ປະກອບການໂຮງງານ ຕ້ອງໄດ້ສຶກສາຂໍ້ມູນນຳຂະແໜງອຸດສາຫະກຳ ແລະ ການຄ້າ ດ້ານລະບຽບກົດໝາຍທີ່ກ່ຽວຂ້ອງກັບມາດຕະຖານ ໃນການສ້າງຕັ້ງໂຮງງານ ເຊັ່ນ: ສະຖານທີ່ຕັ້ງ, ອາຄານໂຮງງານ, ຂະບວນການຜະລິດ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນການຜະລິດ, ລະບົບຄວາມປອດໄພ, ສຸຂະອະນາໄມ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ການຮັບປະກັນຄຸນນະພາບຜະລິດຕະພັນ ແລະ ອື່ນໆ. ໃນນີ້, ຕ້ອງປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຂອງຂະແໜງການກ່ຽວຂ້ອງ ເຊັ່ນ: ໄດ້ຮັບໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນພາຍໃນ.

4.2 ພາຍຫຼັງທີ່ສຳເລັດການສ້າງຕັ້ງໂຮງງານ ແລະ ສາມາດຜະລິດທົດລອງ ໂດຍຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ ແລະ ຕາມກຳນົດເວລາທີ່ຮັບຮອງເອົາໃນບົດວິພາກເສດຖະກິດ-ເຕັກນິກແລ້ວ, ຕ້ອງປະກອບຄຳຮ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ ແລະ ຂັດຕິດເອກະສານທີ່ກ່ຽວຂ້ອງເປັນ 3 ຊຸດ ຍື່ນຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານ ຕາມລະບຽບການ.

**ມາດຕາ 5: ການປະກອບເອກະສານຂໍອະນຸຍາດດຳເນີນກິດຈະການໂຮງງານ**

ບັນດາເອກະສານທີ່ກ່ຽວຂ້ອງກັບການຂໍອະນຸຍາດດຳເນີນກິດຈະການໂຮງງານ ມີຄື:

1). ໃບຄຳຮ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ (ແບບຟອມ ຮ/ງ 1).

2). ໃບມອບສິດໃຫ້ຜູ້ມາພົວພັນປະກອບເອກະສານ.

3). ສຳເນົາໃບສັນຍາເຊົ່າທີ່ດິນ/ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ.

4). ແຜນວາດຂະບວນການຜະລິດ ພ້ອມດ້ວຍບົດອະທິບາຍ.

5). ລາຍການເຄື່ອງຈັກໃນໂຮງງານ (ຕ້ອງແມ່ນເຄື່ອງຈັກໃໝ່ 100% ແລະ ຂັດຕິດສະເປັກ, ແຄັດຕາລັອກຂອງເຄື່ອງຈັກ).

6). ສຳເນົາໃບຢັ້ງຢືນຄຸນນະພາບຜະລິດຕະພັນ (ຕາມແຕ່ລະກໍລະນີທີ່ມີມາດຕະຖານ ລັກສະນະແບບບັງຄັບ).

7). ໃບຢັ້ງຢືນດ້ານສິ່ງແວດລ້ອມໂຮງງານ ແລະ ແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ.

8). ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ (ຂະໜາດເຈັ້ຍ $A_3$) ທີ່ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ ເຊັ່ນ:

1- ແຜນຜັງສະແດງໃຫ້ເຫັນທີ່ຕັ້ງໂຮງງານ ໃນຂອບເຂດລັດສະໝີ 500 ແມັດ.

2- ແຜນຜັງສະແດງສິ່ງປຸກສ້າງໃນບໍລິເວນໂຮງງານ.

3- ແຜນຜັງກໍ່ສ້າງອາຄານຜະລິດ (ຮູບດ້ານໜ້າ, ຂ້າງ, ຫຼັງ ແລະ ຮູບຕັດ).

4- ແຜນຜັງຕິດຕັ້ງເຄື່ອງຈັກ (ໂດຍສະແດງເລກໝາຍຂອງລາຍການເຄື່ອງຈັກຕາມຂໍ້ທີ 5).

5- ແຜນຜັງຕິດຕັ້ງເຄື່ອງຍົກນ້ຳໜັກ, ແຜນຜັງຕິດຕັ້ງເຕົາອົບ, ເຕົາສະຕີມ (ຖ້າມີ).

6- ແຜນຜັງຕິດຕັ້ງລະບົບໄຟຟ້າ, ພັດລົມ ແລະ ລະບົບລະບາຍອາກາດ.

7- ແຜນຜັງຕິດຕັ້ງລະບົບປ້ອງກັນອັນຕະລາຍ, ອັກຄີໄພ ແລະ ທາງອອກສຸກເສີນ.

9). ແຜນການເຄື່ອນໄຫວປະຈຳປີຂອງໂຮງງານ (ແບບຟອມ ອ1-ອ11).

**ມາດຕາ 6: ຂັ້ນຕອນການພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານ**

ເມື່ອຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ຮັບໃບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

6.1 ລົງກວດກາດ້ານມາດຕະຖານເຕັກນິກຂອງອາຄານໂຮງງານ, ເຄື່ອງຈັກ, ອຸປະກອນການຜະລິດ, ມາດຕະຖານຜະລິດຕະພັນ, ຄວາມປອດໄພ, ສຸຂະອະນາໄມ, ການປະຕິບັດສິດ, ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ຕາມບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ພ້ອມທັງເຮັດບົດບັນທຶກການກວດກາໄວ້ເພື່ອເປັນຫຼັກຖານ (ແບບຟອມ ຣ/ງ 6).

6.2 ໃນກໍລະນີ ຫາກບໍ່ຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂ ຂອງການດຳເນີນກິດຈະການໂຮງງານ ຕາມຂໍ້ 6.1 ຜູ້ດຳເນີນກິດຈະການໂຮງງານ ຕ້ອງດັດແປງ, ແກ້ໄຂໃຫ້ຖືກຕ້ອງ ພາຍໃນເວລາທີ່ກຳນົດໄວ້ໃນບົດບັນທຶກການກວດກາ. ຖ້າກຳນົດເວລາບໍ່ພຽງພໍ ຜູ້ດຳເນີນກິດຈະການ ຕ້ອງຂໍຕໍ່ເວລານຳຂະແໜງອຸດສາຫະກຳ ແລະ ການຄ້າ.

6.3 ໃນກໍລະນີ ຫາກຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂ ຂອງການດຳເນີນກິດຈະການໂຮງງານ ຕາມຂໍ້ 6.1, ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານ ພາຍໃນ 10 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ (ແບບຟອມ ຣ/ງ 3).

**ມາດຕາ 7: ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ**

ໃບອະນຸຍາດດຳເນີນກິດຈະການໂຮງງານມີອາຍຸການນຳໃຊ້ໄດ້ 3 ປີ ແລະ ສາມາດຕໍ່ໄດ້. ໃນບາງກໍລະນີອາດຈະກຳນົດໃຫ້ຕ່ຳກວ່າ 3 ປີ ຫຼື ຫຼາຍກວ່າ 3 ປີ ແຕ່ບໍ່ເກີນ 5 ປີ ໂດຍຂຶ້ນກັບເງື່ອນໄຂຂອງໂຮງງານ ຫຼື ຕາມເງື່ອນໄຂຂອງລະບຽບການສະເພາະໃດນຶ່ງທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະແດງໃບອະນຸຍາດດຳເນີນກິດຈະການໂຮງງານໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍພາຍໃນໂຮງງານ ຫລື ບໍລິສັດຂອງຕົນ.

**ມາດຕາ 8: ການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ຕ້ອງປະກອບຄຳຮ້ອງຂໍຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ (ແບບຟອມ ຣ/ງ 2) ແລະ ບົດລາຍງານສະພາບການດຳເນີນກິດຈະການໂຮງງານ ໃນວາລະຜ່ານມາ (ແບບຟອມ ຣ/ງ 9) ເປັນ 3 ຊຸດ, ພ້ອມດ້ວຍເອກະສານກ່ຽວຂ້ອງທີ່ລະບຸໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ (ໃນກໍລະນີທີ່ມີການປ່ຽນແປງຈາກເດີມ). ຍື່ນຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພາຍໃນ 30 ວັນ ກ່ອນໃບອະນຸຍາດດຳເນີນກິດຈະການໂຮງງານຈະໝົດອາຍຸ. ຂັ້ນຕອນການພິຈາລະນາ ໃຫ້ປະຕິບັດຄືກັນກັບຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ພ້ອມທັງເຮັດບົດບັນທຶກການກວດກາໄວ້ເພື່ອເປັນຫຼັກຖານ (ແບບຟອມ ຣ/ງ 7).

**ມາດຕາ 9: ເງື່ອນໄຂຂອງການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ**

9.1 ຜູ້ດຳເນີນກິດຈະການໂຮງງານ ຕ້ອງດຳເນີນກິດຈະການໂຮງງານເປັນປົກກະຕິ, ຄົບຖ້ວນ ແລະ ຖືກຕ້ອງ ຕາມບົດວິພາກເສດຖະກິດ-ເຕັກນິກ ຂອງໂຮງງານ ແລະ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

9.2 ຜູ້ດຳເນີນກິດຈະການໂຮງງານ ຕ້ອງດຳເນີນກິດຈະການໂຮງງານຄົບຖ້ວນ ແລະ ຖືກຕ້ອງ ຕາມເງື່ອນໄຂຂອງການດຳເນີນກິດຈະການໂຮງງານ ທີ່ໄດ້ອະນຸຍາດໃຫ້ດຳເນີນກິດຈະການຄັ້ງທີ່ຜ່ານມາ ເຊັ່ນ: ມາດຕະຖານດ້ານສະຖານທີ່ຕັ້ງໂຮງງານ, ອາຄານໂຮງງານ, ຂະບວນການຜະລິດ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນການຜະລິດ, ລະບົບຄວາມປອດໄພ, ສຸຂະອະນາໄມ, ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ, ຄຸນນະພາບຜະລິດຕະພັນ ແລະ ອື່ນໆ ຕາມທີ່ລະບຸໄວ້ໃນຂໍ້ 4.1 ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ແລະ ມາດຕາ 14 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

**ມາດຕາ 10: ການຂະຫຍາຍກິດຈະການໂຮງງານ**

10.1 ການຂະຫຍາຍກິດຈະການໂຮງງານ ໂດຍການເພີ່ມກຳລັງແຮງຂອງເຄື່ອງຈັກ ມີ 2 ກໍລະນີ ຄືດັ່ງນີ້:

- ກໍລະນີທີ່ 1: ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນ ບໍ່ເກີນ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ 50% ຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍ.

- ກໍລະນີທີ່ 2: ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນ ເກີນກວ່າ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ 50 ແຮງມ້າຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍ.

10.2 ການຂະຫຍາຍກິດຈະການໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ຫລື ມີການກໍ່ສ້າງອາຄານໂຮງງານໃໝ່ ມີ 2 ກໍລະນີ ຄືດັ່ງນີ້:

- ກໍລະນີທີ່ 1: ໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ 200 ແມັດມົນທົນ, ຖ້າໂຮງງານເພີ່ມເນື້ອທີ່ ຕັ້ງແຕ່ 50% ຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍ.
- ກໍລະນີທີ່ 2: ໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ 200 ແມັດມົນທົນ, ຖ້າໂຮງງານເພີ່ມເນື້ອທີ່ ຕັ້ງແຕ່ 100 ແມັດມົນທົນຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍ.

**ມາດຕາ 11: ການດຳເນີນກິດຈະການໃນສ່ວນຂະຫຍາຍໂຮງງານ**

11.1 ພາຍຫຼັງທີ່ໄດ້ສຳເລັດການຂະຫຍາຍໂຮງງານ ຖືກຕ້ອງຕາມລະບຽບກົດໝາຍແລ້ວ, ຜູ້ດຳເນີນກິດຈະການໂຮງງານ ຕ້ອງປະກອບໃບຄຳຮ້ອງຂໍຂະຫຍາຍກິດຈະການໂຮງງານ (ແບບຟອມ ຮ/ງ 1) ເປັນ 3 ຊຸດ, ພ້ອມດ້ວຍເອກະສານກ່ຽວຂ້ອງຕາມທີ່ລະບຸໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ (ໃນກໍລະນີມີການປ່ຽນແປງຈາກເດີມ) ຍື່ນຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ. ໃນນີ້, ຕ້ອງໄດ້ຮັບໃບອະນຸຍາດຂະຫຍາຍກິດຈະການໂຮງງານ (ແບບຟອມ ຮ/ງ 5) ກ່ອນ ຈຶ່ງສາມາດດຳເນີນກິດຈະການສ່ວນຂະຫຍາຍໄດ້. ຂັ້ນຕອນການພິຈາລະນາຂະຫຍາຍກິດຈະການໂຮງງານ ໃຫ້ປະຕິບັດຄືກັນກັບຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ພ້ອມທັງເຮັດບົດບັນທຶກການກວດກາໄວ້ເພື່ອເປັນຫຼັກຖານ (ແບບຟອມ ຮ/ງ 6).

11.2 ໃບອະນຸຍາດດຳເນີນກິດຈະການສ່ວນຂະຫຍາຍໂຮງງານ ມີອາຍຸນຳໃຊ້ເທົ່າກັນກັບອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານທີ່ຍັງເຫຼືອ.

11.3 ໃນກໍລະນີທີ່ມີການຂະຫຍາຍກິດຈະການໂຮງງານ ດ້ວຍການເພີ່ມທຶນ ຫລື ເພີ່ມກິດຈະການຜະລິດອື່ນໆ ທີ່ຍັງບໍ່ໄດ້ລະບຸໄວ້ໃນໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນກິດຈະການໂຮງງານ, ຜູ້ດຳເນີນກິດຈະການໂຮງງານຕ້ອງຂໍອະນຸຍາດເພີ່ມທຶນ ຫລື ເພີ່ມກິດຈະການນຳຂະແໜງການທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນກ່ອນ ຈຶ່ງພິຈາລະນາໃຫ້ດຳເນີນກິດຈະການໃນສ່ວນຂະຫຍາຍໄດ້.

11.4 ໃນກໍລະນີທີ່ມີການເພີ່ມເຄື່ອງຈັກ ຫຼື ເພີ່ມເນື້ອທີ່ອາຄານໂຮງງານ ແຕ່ບໍ່ເຖິງຂັ້ນຂະຫຍາຍ ຕາມທີ່ກຳນົດໄວ້ຢູ່ໃນຂໍ້ 10.1 ແລະ 10.2 ຂອງຂໍ້ຕົກລົງສະບັບນີ້, ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບ.

**ມາດຕາ 12: ຄຸນນະພາບ, ມາດຕະຖານ ແລະ ຊັບສິນທາງປັນຍາດ້ານອຸດສາຫະກຳ**

ຜູ້ດຳເນີນກິດຈະການໂຮງງານ ຕ້ອງປະຕິບັດຕາມມາດຕາ 15 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບການສະເພາະກ່ຽວກັບຄຸນນະພາບ, ມາດຕະຖານ, ກຳນົດໝາຍເລດຖະກິດ-ເຕັກນິກ, ຊັບສິນທາງປັນຍາດ້ານອຸດສາຫະກຳ (ເຄື່ອງໝາຍການຄ້າ, ສິດທິບັດ, ການອອກແບບອຸດສາຫະກຳ ແລະ ອື່ນໆ... ) ຕາມແຕ່ກໍລະນີຂອງແຕ່ລະປະເພດອຸດສາຫະກຳ.

## ໝວດທີ 3
## ວ່າດ້ວຍການປັບປຸງຖານະທາງດ້ານເຕັກນິກ ແລະ ທາງດ້ານກົດໝາຍ ຂອງໂຮງງານ

**ມາດຕາ 13: ການຍົກຍ້າຍໂຮງງານ**

- ຜູ້ດຳເນີນກິດຈະການໂຮງງານ ມີຈຸດປະສົງຈະຍົກຍ້າຍໂຮງງານໄປແຫ່ງອື່ນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຜັງເມືອງ, ລະບຽບການປຸກສ້າງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. ພ້ອມນີ້, ຕ້ອງດຳເນີນການຕາມຂັ້ນຕອນ ຄືກັນກັບຜູ້ອະນຸຍາດດຳເນີນກິດຈະການໂຮງງານໃໝ່, ໂດຍປະກອບເອກະສານເພີ່ມເຕີມໃນສ່ວນທີ່ມີການປັບປຸງ ແລະ ດັດແກ້.

**ມາດຕາ 14: ການຍົກຍ້າຍເຄື່ອງຈັກ**

14.1 ການຍົກຍ້າຍເຄື່ອງຈັກ ຊົ່ວຄາວ: ຜູ້ດຳເນີນກິດຈະການໂຮງງານ ມີຈຸດປະສົງຈະຍົກຍ້າຍເຄື່ອງຈັກບາງສ່ວນທີ່ຕິດຕັ້ງພາຍໃນໂຮງງານໄປຍັງສະຖານທີ່ອື່ນເປັນການຊົ່ວຄາວ, ໃຫ້ຍື່ນຄຳຮ້ອງຂໍອະນຸຍາດຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພ້ອມທັງລະບຸເຫດຜົນລະອຽດຂອງການຍົກຍ້າຍ. ໃນນີ້, ໃຫ້ຊັດຕິດລາຍການເຄື່ອງຈັກ, ແຜນຜັງການຕິດຕັ້ງເຄື່ອງຈັກທີ່ດັດແກ້ໃໝ່ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ.

ໃນກໍລະນີການຂໍຍົກຍ້າຍຫາກມີເຫດຜົນພຽງພໍ ຂະແໜງອຸດສາຫະກຳ ແລະ ການຄ້າ ຈະອະນຸຍາດໃຫ້ເຄື່ອນຍ້າຍເຄື່ອງຈັກຕາມການຮ້ອງຂໍໄດ້ ພາຍໃນເວລາທີ່ກຳນົດໃຫ້ ແຕ່ບໍ່ເກີນ 1 ປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດເປັນຕົ້ນໄປ. ພ້ອມດຽວກັນນີ້ຕ້ອງໄດ້ກຳນົດເງື່ອນໄຂ ຫລື ວິທີການ ເພື່ອປ້ອງກັນຄວາມປອດໄພ ໄປພ້ອມໆກັນ.

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານ ມີຄວາມຈຳເປັນເພື່ອດຳເນີນກິດຈະການດັ່ງກ່າວເກີນກວ່າ 1 ປີ ກໍ່ສາມາດຕໍ່ໄດ້ອີກ, ແຕ່ຕ້ອງສະເໜີເຫດຜົນເປັນລາຍລະອຽດ. ໃນເມື່ອການສະເໜີມີເຫດຜົນພຽງພໍ ຂະແໜງອຸດສາຫະກຳ ແລະ ການຄ້າ ກໍ່ຈະພິຈາລະນາຕໍ່ໃຫ້ໄດ້ອີກ ແຕ່ບໍ່ເກີນ 1 ປີ.

14.2 ການຍົກຍ້າຍເຄື່ອງຈັກ ຖາວອນ: ໃນກໍລະນີເຄື່ອງຈັກຫາກເປ່ເພ ຫລື ນຳໃຊ້ບໍ່ໄດ້ ຊຶ່ງມີຄວາມຈຳເປັນຕ້ອງໄດ້ເກັບມ້ຽນ ຫລື ຈະສະສາງອອກ, ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຈຳນວນບັນຊີເຄື່ອງຈັກດັ່ງກ່າວເປັນລາຍລັກອັກສອນ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າຊາບ ເພື່ອລົງກວດກາກ່ອນຮື້ຖອນ ແລະ ດັດແກ້ລາຍການເຄື່ອງຈັກຄືນໃໝ່ ພາຍໃນ 15 ວັນ.

**ມາດຕາ 15: ການຢຸດເຊົາການດຳເນີນກິດຈະການໂຮງງານ**

15.1 ການຢຸດເຊົາ ຊົ່ວຄາວ: ຜູ້ດຳເນີນກິດຈະການໂຮງງານ ມີຈຸດປະສົງຈະຢຸດເຊົາການດຳເນີນກິດຈະການໂຮງງານຊົ່ວຄາວເກີນກວ່າ 1 ປີ ຕ້ອງລາຍງານເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃນການຢຸດເຊົາ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 7 ວັນ ກ່ອນທີ່ຈະຢຸດເຊົາການດຳເນີນກິດຈະການໂຮງງານ ເພື່ອພິຈາລະນາຕາມແຕ່ລະກໍລະນີ.

ຜູ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ທີ່ໄດ້ຢຸດເຊົາກິດຈະການໂຮງງານໄປແລ້ວ, ແຕ່ມີຈຸດປະສົງຈະດຳເນີນກິດຈະການໂຮງງານຄືນໃໝ່ ໃຫ້ລາຍງານເປັນລາຍລັກອັກສອນ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບ ເພື່ອກວດກາສະພາບໂຮງງານ ແລະ ເຄື່ອງຈັກ. ພາຍຫຼັງໄດ້ຮັບອະນຸຍາດໃຫ້ສືບຕໍ່ແລ້ວ ຈຶ່ງສາມາດດຳເນີນກິດຈະການໂຮງງານໄດ້, ໃນກໍລະນີໃບອະນຸຍາດດຳເນີນກິດຈະການໂຮງງານຍັງບໍ່ທັນໝົດອາຍຸການນຳໃຊ້.

ໃນການກວດກາໂຮງງານ ແລະ ເຄື່ອງຈັກ ກ່ອນໄດ້ຮັບອະນຸຍາດໃຫ້ເປີດດຳເນີນກິດຈະການໂຮງງານຄືນໃໝ່ນັ້ນ ໃຫ້ປະຕິບັດຕາມມາດຕາ 8 ຂອງຂໍ້ຕົກລົງສະບັບນີ້, ໃນກໍລະນີໃບອະນຸຍາດດຳເນີນກິດຈະການໂຮງງານຫາກໝົດອາຍຸການນຳໃຊ້.

15.2 ການຢຸດເຊົາ ຖາວອນ: ຜູ້ດຳເນີນກິດຈະການໂຮງງານ ມີຈຸດປະສົງຈະຢຸດເຊົາການດຳເນີນກິດຈະການໂຮງງານຢ່າງຖາວອນ ຫລື ສ່ວນໃດສ່ວນໜຶ່ງ, ໃຫ້ລາຍງານເປັນລາຍລັກອັກສອນຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບກ່ອນ 15 ວັນ, ເພື່ອອອກໃບຢັ້ງຢືນການຢຸດເຊົາໃຫ້ຕາມລະບຽບການ (ແບບຟອມ ຮ/ງ 10).

**ມາດຕາ 16: ການຖອນໃບອະນຸຍາດດຳເນີນກິດຈະການໂຮງງານ**

16.1 ໃນກໍລະນີມີອຸປະຕິເຫດເກີດຂຶ້ນພາຍໃນໂຮງງານ ຕາມທີ່ລະບຸໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້, ພາຍຫລັງທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ເຂົ້າກວດກາໂຮງງານ ແລະ ເຄື່ອງຈັກແລ້ວເຫັນວ່າ ໂຮງງານ ຫຼື ເຄື່ອງຈັກນັ້ນບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ການໄດ້ໂດຍປອດໄພ. ຂະແໜງອຸດສາຫະກຳ ແລະ ການຄ້າ ຈະພິຈາລະນາຖອນໃບອະນຸຍາດດຳເນີນກິດຈະການໂຮງງານ. ເມື່ອມີຄຳສັ່ງຖອນໃບອະນຸຍາດດັ່ງກ່າວແລ້ວ ຕ້ອງແຈ້ງໃຫ້ຜູ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ຊາບທັນທີ.

16.2 ກໍລະນີຜູ້ດຳເນີນກິດຈະການໂຮງງານຫາກມີຈຸດປະສົງຈະປົວແປງ ແລະ ປັບປຸງໂຮງງານຄືນ ໃຫ້ຢູ່ໃນສະພາບດີເໝືອນເດີມ ຫລື ສ້າງຕັ້ງໂຮງງານຂຶ້ນໃໝ່ປ່ຽນແທນໂຮງງານເດີມ ໃຫ້ດຳເນີນການຄືກັນກັບຜູ້ຂໍໃບອະນຸຍາດດຳເນີນກິດຈະການໂຮງງານໃໝ່ ແລະ ປະຕິບັດຂັ້ນຕອນ ຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17: ການໂອນ, ການໃຫ້ເຊົ່າ, ການຊື້ ຫລື ຂາຍ ກິດຈະການໂຮງງານ**

17.1 ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຫາກໄດ້ໂອນ, ໃຫ້ເຊົ່າ, ໃຫ້ຊື້ ຫລື ຂາຍກິດຈະການໂຮງງານໃຫ້ຜູ້ອື່ນ ຖືວ່າຜູ້ດຳເນີນກິດຈະການໂຮງງານນັ້ນ ໄດ້ຍົກເລີກການດຳເນີນກິດຈະການໂຮງງານຂອງຕົນ ນັບແຕ່ວັນທີ່ໄດ້ໂອນ, ໃຫ້ເຊົ່າ, ໃຫ້ຊື້ ຫລື ຂາຍໂຮງງານ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 15 ວັນ ນັບແຕ່ວັນທີ່ໄດ້ໂອນ, ໃຫ້ເຊົ່າ ຫລື ຂາຍໂຮງງານເປັນຕົ້ນໄປ.

17.2 ຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫລື ຜູ້ຊື້ ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານ ໂດຍປ່ຽນຖານະທາງດ້ານກົດໝາຍ ພາຍໃນ 30 ວັນນັບແຕ່ວັນທີ່ໄດ້ຮັບໂອນ, ໄດ້ເຊົ່າ, ຫລື ຊື້ກິດຈະການນັ້ນ. ພາຍຫຼັງໄດ້ຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານແລ້ວ ສາມາດເຄື່ອນໄຫວກິດຈະການໄດ້ເປັນການຊົ່ວຄາວ ແລະ ຂະແໜງອຸດສາຫະ

ກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ ຕາມມາດຕາ 6 (ຂໍ້ 6.3) ຂອງຂໍ້ຕົກລົງສະບັບນີ້ ແລະ ໃບອະນຸຍາດສະບັບປ່ຽນແທນນີ້ ມີອາຍຸນຳໃຊ້ໄດ້ພາຍໃນກຳນົດເວລາຂອງອາຍຸໃບອະນຸຍາດເດີມທີ່ຍັງເຫຼືອຢູ່ເທົ່ານັ້ນ.

**ມາດຕາ 18: ການສືບທອດການດຳເນີນກິດຈະການໂຮງງານ**

18.1 ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຫາກເສຍຊີວິດ, ຜູ້ມີສິດສືບທອດ ຫລື ຜູ້ໄດ້ຮັບສິດຄຸ້ມຄອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ, ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 60 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານໄດ້ເສັຍຊີວິດ ແລະ ຜູ້ໄດ້ຮັບສິດສືບທອດ ຕ້ອງປະຕິບັດສິດ ແລະ ພັນທະຂອງຕົນຕາມລະບຽບກົດໝາຍ ແລະ ມີຄວາມຮັບຜິດຊອບຄືກັນກັບຜູ້ດຳເນີນກິດຈະການໂຮງງານໃນໄລຍະຜ່ານມາ.

18.2 ໃນກໍລະນີຜູ້ໄດ້ຮັບສິດສືບທອດຈະດຳເນີນກິດຈະການໂຮງງານນັ້ນຄືນ ຕ້ອງຍື່ນຄຳຮ້ອງຂໍ ໂດຍປະກອບເອກະສານເພີ່ມເຕີມໃນສ່ວນທີ່ມີການປ່ຽນແປງ ຫລື ດັດແກ້ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ ຕາມມາດຕາ 6 (ຂໍ້ 6.3) ຂອງຂໍ້ຕົກລົງສະບັບນີ້. ໃບອະນຸຍາດສະບັບປ່ຽນແທນນີ້ ມີອາຍຸນຳໃຊ້ໄດ້ພາຍໃນກຳນົດເວລາຂອງອາຍຸໃບອະນຸຍາດເດີມທີ່ຍັງເຫຼືອຢູ່ເທົ່ານັ້ນ.

18.3 ໃນກໍລະນີຜູ້ໄດ້ຮັບສິດສືບທອດ ບໍ່ຍື່ນຄຳຮ້ອງຂໍດຳເນີນກິດຈະການໂຮງງານ ໂດຍປ່ຽນຖານະທາງດ້ານກົດໝາຍ ພາຍໃນເວລາ 90 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານໄດ້ ເສັຍຊີວິດ, ຖືວ່າໃບອະນຸຍາດດຳເນີນກິດຈະການໂຮງງານນັ້ນ ໄດ້ໝົດອາຍຸລົງພ້ອມກັບການເສັຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 19: ການປ່ຽນຊື່ໂຮງງານ**

ເມື່ອມີການປ່ຽນຊື່ໂຮງງານ, ປ່ຽນຜູ້ດຳເນີນກິດຈະການໂຮງງານ ຫລື ປ່ຽນຖານະທາງດ້ານກົດໝາຍຂອງບໍລິສັດ ທີ່ຖືກຕ້ອງຕາມລະບຽບກົດໝາຍກ່ຽວຂ້ອງ. ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 15 ວັນ ນັບແຕ່ວັນທີ່ໄດ້ມີການປ່ຽນແປງພ້ອມທັງມີການຢັ້ງຢືນ ແລະ ຮັບຮູ້ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 20: ການຂໍໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ**

ໃນກໍລະນີໃບອະນຸຍາດດຳເນີນກິດຈະການໂຮງງານຫາກສູນຫາຍ ຫລື ຖືກທຳລາຍ ແລະ ມີການແຈ້ງເສັຍຫາຍຕາມລະບຽບການ. ໃຫ້ຜູ້ດຳເນີນກິດຈະການໂຮງງານ ຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພາຍໃນ 15 ວັນ ນັບແຕ່ມື້ຮູ້ການສູນຫາຍ ຫລື ຖືກທຳລາຍ. ພ້ອມນັ້ນກໍ່ຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ເຫດຜົນການສູນຫາຍ ຫລື ຖືກທຳລາຍດັ່ງກ່າວ.

**ມາດຕາ 21: ການເກີດອຸປະຕິເຫດຢູ່ໃນໂຮງງານ**

ໃນກໍລະນີມີອຸປະຕິເຫດເກີດຂຶ້ນ ຍ້ອນສາຍເຫດມາຈາກພາຍໃນ ຫລື ພາຍນອກໂຮງງານ. ເຮັດໃຫ້ລະບົບການຜະລິດເສັຍຫາຍ ແລະ ເປ່ເພ. ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 24 ຊົ່ວໂມງ.

21.1 ໃນກໍລະນີເກີດອຸປະຕິເຫດພາໃຫ້ບຸກຄົນເຖິງຂັ້ນເສັຍຊີວິດ ຫລື ບາດເຈັບຢ່າງໜັກ, ໃຫ້ຜູ້ດຳເນີນກິດຈະການໂຮງງານ ລາຍງານລະອຽດເປັນລາຍລັກອັກສອນ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບທັນທີ ຫຼື ຊ້າສຸດບໍ່ໃຫ້ເກີນ 24 ຊົ່ວໂມງ ນັບແຕ່ເວລາອຸປະຕິເຫດເກີດຂຶ້ນ.

21.2 ໃນກໍລະນີມີອຸປະຕິເຫດເກີດຂຶ້ນ ເຮັດໃຫ້ໂຮງງານຢຸດເຊົາເກີນກວ່າ 7 ວັນ, ໃຫ້ຜູ້ດຳເນີນກິດຈະການໂຮງງານລາຍງານເປັນລາຍລັກອັກສອນຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 15 ວັນ ນັບແຕ່ມື້ໂຮງງານໄດ້ຢຸດເຊົາ.

## ໝວດທີ 4
## ວ່າດ້ວຍອັດຕາຄ່າທຳນຽມຂອງການອອກໃບອະນຸຍາດ

**ມາດຕາ 22: ຄ່າທຳນຽມໃບອະນຸຍາດດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍກິດຈະການໂຮງງານ**

ຄ່າທຳນຽມໃບອະນຸຍາດດຳເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການ, ຂະຫຍາຍກິດຈະການໂຮງງານ, ໃບອະນຸຍາດດຳເນີນກິດຈະການໂຮງງານ(ສະບັບປ່ຽນແທນ), ໃບຢັ້ງຢືນການນຳເຂົ້າເຄື່ອງຈັກ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ຫລື ຊິ້ນສ່ວນອື່ນໆເພື່ອມາຕິດຕັ້ງ, ຜະລິດ, ປະກອບ ຫລື ປຸງແຕ່ງຢູ່ໃນໂຮງງານ ແລະ ການຮັບຮອງດ້ານສິ່ງແວດລ້ອມໂຮງງານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນ ເປັນແຕ່ລະໄລຍະ.

## ໝວດທີ 5
## ວ່າດ້ວຍມາດຕະການຕໍ່ຜູ້ລະເມີດ ແລະ ການປັບໃໝ

**ມາດຕາ 23: ມາດຕະການຕໍ່ຜູ້ລະເມີດ**

ຜູ້ດຳເນີນກິດຈະການໂຮງງານຫາກລະເມີດ ຫລື ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຫລື ບັນດາຂໍ້ກຳນົດ, ແຈ້ງການ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ, ຈະຖືກກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສັຍຫາຍ ແລະ ປັບໃໝ ຕາມແຕ່ລະກໍລະນີ.

**ມາດຕາ 24: ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ**

24.1 ຜູ້ດຳເນີນກິດຈະການໂຮງງານ ຫາກບໍ່ປະຕິບັດຕາມວັກ 2 ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ບໍ່ປະຕິບັດພັນທະຂອງຕົນ ຕາມທີ່ລະບຸໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເປັນຄັ້ງທີ່ 1 ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ ໂດຍເຮັດບົດບັນທຶກໄວ້ເປັນລາຍລັກອັກສອນ.

24.2 ຜູ້ດຳເນີນກິດຈະການໂຮງງານ ບໍ່ປະຕິບັດຕາມລະບຽບການສະເພາະກ່ຽວກັບມາດຕະຖານ ໂຮງງານ, ໃຫ້ເຈົ້າໜ້າທີ່ກວດກາໂຮງງານ ແນະນຳ, ກ່າວເຕືອນ ໂດຍບັນທຶກໄວ້ເປັນລາຍລັກອັກສອນ ໃນປຶ້ມບັນທຶກກວດກາໂຮງງານ (ແບບຟອມ ຮ/ງ 8).

**ມາດຕາ 25: ມາດຕະການໃຊ້ແທນຄ່າເສຍຫາຍ**

ໃນກໍລະນີການເຄື່ອນໄຫວກິດຈະການໂຮງງານ ຫາກໄດ້ສ້າງຄວາມເສຍຫາຍ ຕໍ່ຜູ້ອອກແຮງງານ, ຕໍ່ພາຍໃນໂຮງງານ ຫຼື ຕໍ່ພາຍນອກໂຮງງານ ຕາມທີ່ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ. ຕ້ອງທົດແທນຄ່າເສຍຫາຍຕາມຄວາມເປັນຈິງ ແລະ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

**ມາດຕາ 26: ມາດຕະການປັບໃໝ**

ປະຕິບັດຕາມມາດຕາ 56 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຜູ້ດຳເນີນກິດຈະການໂຮງງານ ຫາກລະເມີດມາດຕາ 4, 8, 11, 12, 13, 14, 15, 17, 18, 19, 20, 21 ແລະ 24 ຂອງຂໍ້ຕົກລົງລະບັບນີ້ ຈະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

| ກໍລະນີປັບໃໝ | ມາດຕາທີ່ລະເມີດ | ອັດຕາການປັບໃໝ (ຈຳນວນເທົ່າຕົວຂອງຄ່າທຳນຽມ ມາດຕາ 22) |
|---|---|---|
| 1 | ມາດຕາ 4, 8, 11 ແລະ 13 | 10 |
| 2 | ມາດຕາ 14, 17, 18, 19, 20 ແລະ 24 | 8 |
| 3 | ມາດຕາ 12, 15 ແລະ 21 | 5 |

**ມາດຕາ 27: ມາດຕະການທາງອາຍາ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານ ຫາກບໍ່ປະຕິບັດຕາມມາດຕະການປັບໃໝ ແລະ ລະເມີດນອກຈາກທີ່ກ່າວມາຂ້າງເທິງນີ້ ເຊັ່ນ: ປອມແປງໃບອະນຸຍາດດຳເນີນກິດຈະການໂຮງງານ ຫລື ເອກະສານທີ່ກ່ຽວຂ້ອງ, ບໍ່ປະຕິບັດມາດຕະການທີ່ຮັບປະກັນຄວາມປອດໄພໂຮງງານ ຊຶ່ງພາໃຫ້ຄົນເສຍຊີວິດ, ເສຍສຸຂະພາບ ຈະຖືກປະຕິບັດມາດຕະການທາງອາຍາ ແລະ ມາດຕະການໂທດເພີ່ມ ຕາມມາດຕາ 57 ແລະ 58 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ຕາມແຕ່ລະກໍລະນີ.

## ໝວດທີ່ 6
## ບົດບັນຍັດສຸດທ້າຍ

**ມາດຕາ 28: ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ເປັນຜູ້ຊີ້ນຳ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງລະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບ ກັບລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

ມາດຕາ 23: ຜົນສັກສິດ ແລະ ການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ປ່ຽນແທນ

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ຮຽວລະພວາດ ສະແຫວງສຶກສາ